# ບົດຄວາມ:

## ສິ່ງທີ່ຕ້ອງຄຳນຶງໃນເວລາເລືອກນາຍໜ້າຊື້-ຂາຍຫຼັກຊັບ, ພວກເຂົາມີໜ້າທີ່ຫຍັງ ແລະ ເປັນຫຍັງຈິ່ງສຳຄັນ?


**ຂຽນໂດຍ:** ນາງ ອານຸສອນ ອຸ້ຍພິລາວົງ

ຫົວໜ້າໜ່ວຍງານ ຊຳລະ ແລະ ຮັບຝາກຫຼັກຊັບ, ຕະຫຼາດຫຼັກຊັບລາວ

ອະດີດ ຫົວໜ້າຂະແໜງ ຄຸ້ມຄອງຕິດຕາມຕະຫຼາດ, ຕະຫຼາດຫຼັກຊັບລາວ

ອະດີດ ຫົວໜ້າຂະແໜງ ເປີດເຜີຍຂໍ້ມູນ, ຕະຫຼາດຫຼັກຊັບລາວ

## ບົດຄວາມ: ສິ່ງທີ່ຕ້ອງຄຳນຶງໃນເວລາເລືອກນາຍໜ້າຊື້-ຂາຍຫຼັກຊັບ, ພວກເຂົາມີໜ້າທີ່ຫຍັງ ແລະ ເປັນຫຍັງຈຶ່ງສຳຄັນ?



ເມື່ອເວົ້າເຖິງການລົງທຶນໃນຕະຫຼາດຮຸ້ນລາວ ຫຼື ຕະຫຼາດຫຼັກຊັບລາວ ທີ່ສ້າງຕັ້ງມາໄດ້ 10 ປີແລ້ວ (10/10/2010-10/10/2020) ຖືວ່າເລີ່ມເປັນທີ່ຮູ້ຈັກກັນຫຼາຍຂຶ້ນໃນສັງຄົມລາວຖ້າທຽບໃສ່ເມື່ອກ່ອນ ເຊິ່ງສາມາດເຫັນໄດ້ຈາກການໃຫ້ຄວາມຮູ້ກ່ຽວກັບຕະຫຼາດທຶນລາວ ຜ່ານຊ່ອງທາງຕ່າງໆ ເຊັ່ນ ການຈັດສຳມະນາ, ໂທລະພາບ, ວິທະຍຸ, ການເພີ່ມຫຼັກສູດການສອນກ່ຽວກັບຕະຫຼາດທຶນໃນສະຖາບັນການສຶກສາຕ່າງໆໃນລາວ ແລະ ການຈັດກິດຈະກຳຕ່າງໆຂອງຕະຫຼາດຫຼັກຊັບລາວ ເຮັດໃຫ້ສັງຄົມລາວມີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຕະຫຼາດຮຸ້ນລາວຫຼາຍຂຶ້ນນັບມື້. ຫຼາຍທ່ານກໍ່ເລີ່ມໃຫ້ຄວາມສົນໃຈ ແລະ ຕ້ອງການຢາກລອງເຂົ້າມາລົງທຶນ ເພື່ອສຳພັດກັບປະສົບການຕົວຈິງໃນຕະຫຼາດຫຼັກຊັບລາວ ແຕ່ກໍ່ຍັງມີຫຼາຍທ່ານໂດຍສະເພາະແມ່ນຜູ້ລົງທຶນມືໃໝ່ ທີ່ມັກຈະມີຄຳຖາມໃນໃຈວ່າ ຖ້າຢາກເຂົ້າມາຊື້ ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວນັ້ນ ຄວນເຮັດແນວໃດ, ຕ້ອງເລີ່ມຕົ້ນຈາກໃສ, ຕ້ອງໄປຫາໃຜກ່ອນ, ຄວນຊື້ຮຸ້ນໃດດີ ແລະ ທີ່ສຳຄັນຕ້ອງມີເງິນຫຼາຍປານໃດຈຶ່ງຊື້ໄດ້ ເຊິ່ງບຸກຄົນທີ່ຈະຊ່ວຍໃຫ້ຂໍ້ມູນເຫຼົ່ານີ້ແກ່ທ່ານໄດ້ນັ້ນກໍ່ແມ່ນ ບໍລິສັດຫຼັກຊັບ ເພາະວ່າບໍລິສັດຫຼັກຊັບນັ້ນຈະເປັນຕົວແທນໃຫ້ກັບຜູ້ລົງທຶນໃນການດຳເນີນການຊື້-ຂາຍຮຸ້ນ, ໃຫ້ບໍລິການກ່ຽວກັບການຊື້-ຂາຍຮຸ້ນແບບຄົບວົງຈອນ ຄື ຕັ້ງແຕ່ກ່ອນເລີ່ມການຊື້-ຂາຍ ໄປຈົນເຖິງ ຫຼັງການຊື້-ຂາຍ, ເປັນທີ່ປຶກສາ, ແນະນຳກ່ຽວກັບການລົງທຶນ, ສ້າງບົດວິເຄາະໃຫ້ຜູ້ລົງທຶນ ແລະ ແຈ້ງຂໍ້ມູນທີ່ເປັນປະໂຫຍດກ່ຽວກັບການຊື້-ຂາຍຮຸ້ນເປັນປະຈຳ ລວມທັງການສົ່ງສັນຍານເຕືອນຕ່າງໆໃຫ້ຜູ້ລົງທຶນໄດ້ຮັບຊາບເປັນແຕ່ລະໄລຍະ.



### ໜ້າທີ່ຂອງນາຍໜ້າຊື້-ຂາຍຫຼັກຊັບມີຫຍັງແດ່?

ບໍລິສັດຫຼັກຊັບ ທີ່ໃຫ້ບໍລິການເປັນນາຍໜ້າຊື້-ຂາຍຫຼັກຊັບ ຫຼື ໂບຼກເກີ້ ມີໜ້າທີ່ເປັນສື່ກາງ ຫຼື ເປັນຕົວແທນໃຫ້ກັບຜູ້ລົງທຶນໃນການດຳເນີນການຊື້-ຂາຍຫຼັກຊັບ, ຮັບຄຳສັ່ງຊື້-ຂາຍຈາກຜູ້ລົງທຶນ, ຢັ້ງຢືນຜົນການຊື້-ຂາຍ ເມື່ອເກີດມີການຈັບຄູ່, ດູແລຮັກສາບັນຊີຂອງຜູ້ລົງທຶນ, ໃຫ້ຂໍ້ມູນ ຫຼື ຄຳແນະນຳກ່ຽວກັບການລົງທຶນ ແລະ ຊ່ວຍວິເຄາະຂໍ້ມູນກ່ຽວກັບການລົງທຶນ ເພື່ອໃຫ້ຜູ້ລົງທຶນໃຊ້ປະກອບເຂົ້າໃນການຕັດສິນໃຈກ່ອນທີ່ຈະລົງທຶນ.

ອີກໜ້າທີ່ໜຶ່ງທີ່ສຳຄັນຂອງນາຍໜ້າຊື້-ຂາຍຫຼັກຊັບ ກໍ່ຄື ເປັນສື່ກາງລະຫວ່າງ ຜູ້ລົງທຶນ ກັບ ຕະຫຼາດຫຼັກຊັບລາວ ໂດຍເປັນຜູ້ຮັບຂໍ້ມູນຄຳສັ່ງຊື້ ຂາຍຈາກຜູ້ລົງທຶນ ແລ້ວສົ່ງເຂົ້າສູ່ລະບົບການຊື້-ຂາຍຂອງຕະຫຼາດຫຼັກຊັບລາວ

ເຊິ່ງມີພຽງບໍລິສັດຫຼັກຊັບທີ່ເຮັດໜ້າທີ່ເປັນນາຍໜ້າຊື້ ຂາຍຫຼັກຊັບເທົ່ານັ້ນ ທີ່ສາມາດສົ່ງຄຳສັ່ງຊື້ ຂາຍເຂົ້າສູ່ລະບົບຂອງຕະຫຼາດຫຼັກຊັບໄດ້, ສ່ວນຕະຫຼາດຫຼັກຊັບແມ່ນເປັນຜູ້ໃຫ້ບໍລິການອຳນວຍຄວາມສະດວກທາງດ້ານລະບົບການຊື້ ຂາຍ, ຈົດທະບຽນຫຼັກຊັບ, ສະສາງ ແລະ ຊຳລະທຸລະກຳທີ່ມີການຊື້ ຂາຍໃນຕະຫຼາດຫຼັກຊັບລາວ.

ຈາກທີ່ໄດ້ກ່າວໃຫ້ເຫັນເຖິງໜ້າທີ່ຂອງນາຍໜ້າຊື້-ຂາຍຫຼັກຊັບມາຂ້າງເທິງນັ້ນ ເຫັນວ່າ ນາຍໜ້າຊື້-ຂາຍຫຼັກຊັບ ມີຄວາມສຳຄັນຢ່າງຍິ່ງສຳລັບຜູ້ລົງທຶນ ໂດຍສະເພາະແມ່ນຜູ້ລົງທຶນມືໃໝ່ ທີ່ຕ້ອງໄດ້ອາໄສຄຳແນະນຳ, ຄຳປຶກສາ ຫຼື ເວົ້າອີກຢ່າງໜຶ່ງວ່າຕ້ອງມີພີ່ລ້ຽງທີ່ດີ ຄ່ອຍໃຫ້ຄຳແນະນຳແກ່ຜູ້ລົງທຶນໃຫ້ຮູ້ຈັກການລົງທຶນເທື່ອລະກ້າວ ຕັ້ງແຕ່ພື້ນຖານໄປຈົນກວ່າຜູ້ລົງທຶນຈະມີຄວາມຊຳນານ. ສະນັ້ນ, ການມີນາຍໜ້າຊື້ ຂາຍຫຼັກຊັບທີ່ດີໄວ້ເປັນທີ່ປຶກສາ ກໍ່ຈະຊ່ວຍຫຼຸດຜ່ອນຄວາມສ່ຽງໃນການລົງທຶນໄປໄດ້ໃນລະດັບໜຶ່ງ ແຕ່ກໍ່ບໍ່ແມ່ນເລື່ອງງ່າຍສຳລັບນັກລົງທຶນລາວພໍປານໃດ ໃນການຕັດສິນໃຈເລືອກນາຍໜ້າຊື້ ຂາຍຫຼັກຊັບ ເນື່ອງຈາກບໍລິສັດຫຼັກຊັບໃນ ສປປ ລາວ ທີ່ເຮັດໜ້າທີ່ເປັນນາຍໜ້າຊື້ ຂາຍຫຼັກຊັບນັ້ນມີພຽງ 3 ບໍລິສັດເທົ່ານັ້ນ ເຮັດໃຫ້ຄວາມສາມາດທາງດ້ານການແຂ່ງຂັນຍັງມີໜ້ອຍ ຈຶ່ງເຮັດໃຫ້ຜົນງານທາງດ້ານການໃຫ້ບໍລິການຍັງບໍ່ພົ້ນເດັ່ນ ແລະ ເປັນທີ່ສະດຸດຕາເທົ່າທີ່ຄວນ. ແຕ່ຜູ້ລົງທຶນສາມາດເລືອກເຟັ້ນ ໂດຍອີງໃສ່ຄຸນສົມບັດທີ່ເປັນພື້ນຖານຂອງນາຍໜ້າຊື້-ຂາຍຫຼັກຊັບ ແລະ ຕ້ອງຄຳນຶງເຖິງສິ່ງຕ່າງໆ ຄື:

**ສິ່ງທີ່ຕ້ອງຄຳນຶງໃນເວລາເລືອກນາຍໜ້າຊື້-ຂາຍຫຼັກຊັບ**



ກ່ອນທີ່ເຮົາຈະຕັດສິນໃຈເລືອກເປັນລູກຄ້າຂອງບໍລິສັດຫຼັກຊັບ ຫຼື ນາຍໜ້າຊື້-ຂາຍຫຼັກຊັບໃດນັ້ນ ກໍ່ຄວນພິຈາລະນາຄຸນສົມບັດຕ່າງໆໃຫ້ຮອບຄອບ ແລະ ຮອບດ້ານເປັນຢ່າງດີສາກ່ອນ ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງໃນການລົງທຶນຂອງເຮົາໃນລະດັບໃດໜຶ່ງ ຊຶ່ງຄຸນສົມບັດຂອງນາຍໜ້າຊື້-ຂາຍຫຼັກຊັບ ທີ່ດີຕ້ອງປະກອບມີຄື:

- **ມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**: ນາຍໜ້າຊື້-ຂາຍຫຼັກຊັບ ຫຼື ໂບຼກເກີ້ ຕ້ອງເປັນຜູ້ທີ່ມີໃບຢັ້ງຢືນການປະກອບວິຊາຊີບເປັນນາຍໜ້າຊື້-ຂາຍຫຼັກຊັບຕາມການອະນຸຍາດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.
- **ເປັນຜູ້ແນະນຳທີ່ດີ**: ຄຸນສົມບັດຂອງນາຍໜ້າຊື້-ຂາຍຫຼັກຊັບທີ່ດີ ກໍ່ຄືການເປັນພີ່ລ້ຽງທີ່ດີ ຄ່ອຍໃຫ້ຄຳແນະນຳແກ່ຜູ້ລົງທຶນໃຫ້ຮູ້ຈັກການລົງທຶນເທື່ອລະກ້າວ ຕັ້ງແຕ່ພື້ນຖານໄປຈົນເຖິງເທັກນິກຂັ້ນສູງ ຈົນກວ່າຜູ້ລົງທຶນຈະມີຄວາມຊຳນານໃນເລື່ອງການລົງທຶນ ດັ່ງນັ້ນໃນຖານະທີ່ເຮົາເປັນຜູ້ລົງທຶນ ຄວນໝັ່ນຕັ້ງຄຳຖາມຖາມນາຍໜ້າຊື້-ຂາຍຫຼັກຊັບໃນສິ່ງທີ່ເຮົາບໍ່ຮູ້ ຫຼື ຢາກຮູ້ ກ່ຽວກັບການລົງທຶນໃຫ້ໄດ້ຫຼາຍທີ່ສຸດ ບໍ່ຄວນເກງໃຈ ຫຼື ເຂີນອາຍທີ່ຈະຕັ້ງຄຳຖາມ.
- **ໃຫ້ຂໍ້ມູນ ແລະ ຂ່າວສານ**: ສິ່ງສຳຄັນທີ່ຈະຊ່ວຍໃຫ້ຜູ້ລົງທຶນວິເຄາະການລົງທຶນໄດ້ຢ່າງມີປະສິດທິພາບນັ້ນຄືຂໍ້ມູນຂ່າວສານ ສະນັ້ນ ການເລືອກນາຍໜ້າຊື້-ຂາຍຫຼັກຊັບ ຜູ້ລົງທຶນຕ້ອງຄຳນຶງວ່າ ນາຍໜ້າຊື້-ຂາຍຫຼັກຊັບນັ້ນຈະມີຄວາມພ້ອມໃນການໃຫ້ຂໍ້ມູນຂ່າວສານທີ່ວ່ອງໄວ ແລະ ຖືກຕ້ອງໄດ້ຫຼາຍປານໃດ ເຊັ່ນວ່າ: ຖ້າເຮົາເປັນຜູ້ລົງທຶນໄລຍະຍາວ ຂໍ້ມູນທີ່ເຮົາຈະໄດ້ຮັບຈາກນາຍໜ້າຊື້-ຂາຍຫຼັກຊັບ ຄວນຈະແມ່ນການວິເຄາະແນວໂນ້ມທາງດ້ານເສດຖະກິດ-ສັງຄົມ ຫຼື ສະພາບການຂອງຕ່າງປະເທດວ່າເປັນແນວໃດແດ່ ແລະ ຈະມີຜົນກະທົບຫຍັງແດ່ຕໍ່ຂະແໜງການເສດຖະກິດໃນບ້ານເຮົາ ລວມເຖິງກຸ່ມທຸລະກິດທີ່ອາດຈະເຕີບໂຕໃນປະນາຄົດວ່າມີກຸ່ມໃດແດ່. ແຕ່ຖ້າເຮົາເປັນຜູ້ລົງທຶນໄລຍະສັ້ນ ຫຼື ຊື້-ຂາຍແບບລາຍວັນ ກໍ່ຄວນຈະໄດ້ຮັບຂໍ້ມູນຂ່າວສານທີ່ທັນຕໍ່ເຫດການແບບທັນທີ ຊຶ່ງໄດ້ແກ່ ຂໍ້ມູນອັດຕາແລກປ່ຽນເງິນຕາຕ່າງປະເທດ, ອັດຕາດອກ

ເບ້ຍ, ສະພາບທາງການເມືອງ, ດັດສະນີ, ລາຄາຮຸ້ນ ໂດຍໂບຼກເກີ້ຈະຕ້ອງວິເຄາະສະຖານະການໃຫ້ຜູ້ລົງທຶນໄດ້ຢ່າງທັນທີ ແລະ ທັນຕໍ່ເຫດການວ່າມີຄວາມສ່ຽງ ຫຼື ຜົນກະທົບແນວໃດແດ່.

- **ສະໜອງຄໍາສັ່ງຊື້-ຂາຍຂອງເຮົາໄດ້ຢ່າງວ່ອງໄວ ແລະ ຖືກຕ້ອງ**: ການທີ່ນາຍໜ້າຊື້-ຂາຍຫຼັກຊັບ ສາມາດປະຕິບັດຕາມຄໍາສັ່ງຊື້-ຂາຍຂອງຜູ້ລົງທຶນໄດ້ຢ່າງຖືກຕ້ອງ ແລະ ວ່ອງໄວ ຍ່ອມເປັນທີ່ໜ້າພໍໃຈ ເພາະຖືເປັນສ່ວນໜຶ່ງທີ່ຊ່ວຍເຮັດໃຫ້ເພີ່ມປະລິມານການຊື້-ຂາຍຂອງຜູ້ລົງທຶນໄດ້ຫຼາຍຂຶ້ນ. ດັ່ງນັ້ນ ຖ້າບໍລິສັດຫຼັກຊັບໃດ ຫາກມີນາຍໜ້າຊື້-ຂາຍຫຼັກຊັບຫຼາຍພຽງພໍ ກໍ່ຈະສາມາດສະໜອງຄໍາສັ່ງຊື້-ຂາຍຂອງຜູ້ລົງທຶນກໍ່ໄດ້ຢ່າງວ່ອງໄວ.
- **ມີຄວາມໜ້າເຊື່ອຖື**: ສິ່ງສໍາຄັນອີກຢ່າງໜຶ່ງທີ່ຕ້ອງຄໍານຶງໃນການເລືອກນາຍໜ້າຊື້-ຂາຍຫຼັກຊັບນັ້ນແມ່ນຄວາມໜ້າເຊື່ອຖືຂອງຕົວນາຍໜ້າເອງ, ຊຶ່ງຜູ້ລົງທຶນສາມາດຮູ້ໄດ້ຈາກຜົນການດໍາເນີນງານທີ່ຜ່ານມາຂອງນາຍໜ້າຊື້-ຂາຍຫຼັກຊັບວ່າເປັນແນວໃດແດ່, ຊື່ສຽງຂອງທີມງານເພີ່ນເປັນແນວໃດ ແລະ ທີ່ສໍາຄັນຄືຕ້ອງມີໃບຢັ້ງຢືນການປະກອບວິຊາຊີບເປັນ ນາຍໜ້າຊື້-ຂາຍຫຼັກຊັບ ຕາມກົດໝາຍກໍານົດ ຈຶ່ງຈະມີຄວາມໜ້າເຊື່ອຖື.
- **ມີສິ່ງອໍານວຍຄວາມສະດວກທີ່ທັນສະໄໝ**: ຄວນສິ່ງອໍານວຍຄວາມສະດວກທີ່ມີປະສິດທິພາບ ແລະ ພຽງພໍໃນຫ້ອງຄ້າຫຼັກຊັບຖືເປັນສິ່ງສໍາຄັນ ແລະ ຈໍາເປັນ ເພາະເວລາຜູ້ລົງທຶນມາໃຊ້ບໍລິການ ຢ່າງນ້ອຍນາຍໜ້າຊື້-ຂາຍຫຼັກຊັບຕ້ອງມີຄອມພິວເຕີ້ພຽງພໍໃນການສົ່ງຄໍາສັ່ງຊື້-ຂາຍໃຫ້ຜູ້ລົງທຶນ ພ້ອມນັ້ນກໍ່ຄວນມີຈໍສະແດງຂໍ້ມູນການຊື້-ຂາຍ ແລະ ຈໍສະແດງຂໍ້ມູນຂ່າວສານຕ່າງໆ ເພື່ອໃຫ້ຜູ້ລົງທຶນໄດ້ເຫັນຂໍ້ມູນໃນເວລາເຂົ້າມາຫ້ອງຄ້າຫຼັກຊັກ.




- **ມີການບໍລິການຫຼັງການຂາຍທີ່ດີ**: ນາຍໜ້າຊື້-ຂາຍຫຼັກຊັບ ນອກຈາກຈະຄອຍໃຫ້ຄໍາປຶກສາ ແລະ ແນະນໍາເລື່ອງການລົງທຶນແລ້ວ ກໍ່ຄວນມີການບໍລິການຫຼັງການຂາຍທີ່ດີ ເປັນຕົ້ນແມ່ນ ແຈ້ງຍອດເງິນ ແລະ ຫຼັກຊັບໃຫ້ຜູ້ລົງທຶນໄດ້ຮັບຊາບເມື່ອສໍາເລັດການຊື້-ຂາຍ, ແຈ້ງເມື່ອຜູ້ລົງທຶນໄດ້ຮັບເງິນປັນຜົນ, ອັບເດດຂໍ້ມູນຂ່າວສານໃຫ້ລູກຄ້າໄດ້ຮັບຮູ້ໃນແຕ່ລະໄລຍະເມື່ອມີການປ່ຽນແປງຕ່າງໆຈາກພາກສ່ວນຕ່າງໆ.

ເຖິງແມ່ນວ່າ ນາຍໜ້າຊື້-ຂາຍຫຼັກຊັບ ຈະເຮັດໜ້າທີ່ໃຫ້ບໍລິການຄົບວົງຈອນຕາມທີ່ໄດ້ກ່າວມານັ້ນກໍ່ຕາມ ແຕ່ການຕັດສິນໃຈຂັ້ນສຸດທ້າຍເພື່ອສັ່ງຊື້-ສັ່ງຂາຍຫຼັກຊັບນັ້ນ ແມ່ນຢູ່ທີ່ຕົວຜູ້ລົງທຶນເອງ ເພາະຜູ້ລົງທຶນຈະເປັນຜູ້ທີ່ຕ້ອງໄດ້ຮັບຜົນການຕັດສິນໃຈດັ່ງກ່າວ ບໍ່ວ່າຜົນການຊື້-ຂາຍນັ້ນຈະເຮັດໃຫ້ຂາດທຶນ ຫຼື ມີກໍາໄລ ຊຶ່ງນາຍໜ້າຊື້-ຂາຍຫຼັກຊັບຈະບໍ່ມີສ່ວນຮັບຜິດຊອບແຕ່ຢ່າງໃດ (ຍົກເວັ້ນກໍລະນີທີ່ເກີດຈາກການຈົງໃຈໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ໂດຍຜິດຈັນຍາບັນຂອງນາຍໜ້າຊື້-ຂາຍຫຼັກຊັບເອງ). ແລະ ສິ່ງໆຕ່າງໆທີ່ກ່າວມາຂ້າງເທິງນັ້ນ ເປັນພຽງສ່ວນໜຶ່ງທີ່ຈະຊ່ວຍໃຫ້ຜູ້ລົງທຶນ ນໍາໄປປະກອບການຕັດສິນໃຈໃນເວລາເລືອກນາຍໜ້າຊື້-ຂາຍຫຼັກຊັບ ເພື່ອເລືອກເຟັ້ນໃຫ້ໄດ້ທີ່ປຶກສາ ແລະ ຜູ້ໃຫ້ຄໍາແນະນໍາທີ່ດີກ່ຽວກັບການລົງທຶນໃນຫຼັກຊັບ ຊຶ່ງຈະຊ່ວຍຫຼຸດຜ່ອນຄວາມສ່ຽງຈາກການລົງທຶນໄປໄດ້ໃນລະດັບໃດໜຶ່ງເທົ່ານັ້ນ, ເຖິງແມ່ນວ່າ ນາຍໜ້າຊື້-ຂາຍຫຼັກຊັບຈະໃຫ້ຄໍາແນະນໍາໄດ້ດີປານໃດກໍ່ຕາມ ຜູ້ລົງທຶນກໍ່ຕ້ອງໄດ້ສຶກສາຂໍ້ມູນດັ່ງກ່າວນັ້ນດ້ວຍຕົນເອງໃຫ້ລະອຽດກ່ອນການຕັດສິນໃຈລົງທຶນ.

## ເອກະສານອ້າງອີງ:


1. ບົດຄວາມຕະຫຼາດຫຼັກຊັບລາວ http://www.lsx.com.la/about/articles/viewPost.do?lang=lo&pageNo=4&postId=34&searchItem=all&searchText=
2. ກົດໝາຍວ່າດ້ວຍຫຼັກຊັບ, ເລກທີ 79/ສພຊ ລົງວັນທີ 03 ທັນວາ 2019. https://www.lsc.gov.la/regulation/nitikam.php
3. ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ, ເລກທີ 004/ຄຄຊ ລົງວັນທີ 18 ກຸມພາ 2014.
4. https://www.lsc.gov.la/regulation/labiab.php
5. https://www.bcel-kt.com/index.php?r=site/display&id=7
6. http://www.lxs.com.la/index.php?option=com_content&view=article&id=85&Itemid=37&lang=la
7. https://www.set.or.th/education/th/begin/stock_content10.pdf